ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ເລກທີ 2828 /ຮສສ

ນະຄອນຫຼວງວຽງຈັນ,ວັນທີ ____/____/2013

08 AUG 2013

# ຂໍ້ຕົກລົງ

## ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງກົມຄຸ້ມຄອງແຮງງານ

- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 138/ນຍ, ລົງວັນທີ 4 ພຶດສະພາ 2007 ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ.
- ອີງຕາມການຄົ້ນຄ້ວາຂອງກົມຄຸ້ມຄອງແຮງງານ ແລະ ການສະເໜີຂອງ ກົມຈັດຕັ້ງ - ພະນັກງານ, ກະຊວງແຮງງານ ແລະ ສະ ຫວັດດີການສັງຄົມ.

## ລັດຖະມົນຕີວ່າການ

## ກະຊວງ ແຮງງານ ແລະ ສະຫວັດດີການສັງຄົມຕົກລົງ:

## ໝວດທີ I

## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່, ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ແລະ ແບບແຜນວິທີເຮັດວຽກຂອງກົມຄຸ້ມຄອງແຮງງານ.

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ**

ກົມຄຸ້ມຄອງແຮງງານຂຽນຫຍໍ້ວ່າ: "ຄຮງ" ແມ່ນກົມວິຊາການໜຶ່ງ ສັງກັດໃນໂຄງປະກອບກົງຈັກຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ, ມີພາລະບົດບາດເປັນເສນາທິການໃຫ້ແກ່ລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ໃນການຄົ້ນຄ້ວາ ສ້າງນະໂຍບາຍ, ກົດໝາຍ, ດຳລັດ, ຂໍ້ຕົກລົງ ແລະ ລະບຽບການ ຕ່າງໆກ່ຽວກັບການຄຸ້ມຄອງ ແລະ ການນຳໃຊ້ແຮງງານລາວທີ່ເຮັດວຽກ ຢູ່ພາຍໃນປະເທດ, ຢູ່ຕ່າງປະເທດ ແລະ ແຮງງານຕ່າງປະເທດທີ່ເຂົ້າມາເຮັດວຽກຢູ່ ສປປ ລາວ, ບົນພື້ນຖານແນວທາງນະໂຍບາຍຂອງພັກ ແລະ ແຜນຍຸດທະສາດຂອງລັດທີ່ກຳນົດໄວ້.

## ໝວດທີ II

## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3. ໜ້າທີ່.**

1. ຄົ້ນຄວ້າແລະ ຜັນຂະຫຍາຍແນວທາງນະໂຍບາຍຂອງພັກອອກເປັນ ກົດໝາຍ, ດຳລັດ,